ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ເລກທີ 957/ກຕສ

ນະຄອນຫຼວງວຽງຈັນ, ວັນທີ 16 ມີນາ 2023

# ຂໍ້ຕົກລົງ
# ວ່າດ້ວຍ ມາດຕະຖານສະຖານທີ່ໃຫ້ບໍລິການໄປສະນີ

- ອີງຕາມ ກົດໝາຍວ່າດ້ວຍ ການໄປສະນີ (ສະບັບປັບປຸງ) ສະບັບເລກທີ 45/ສພຊ, ລົງວັນທີ 25 ທັນວາ 2013;
- ອີງຕາມ ດຳລັດວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງເຕັກໂນໂລຊີ ແລະ ການສື່ສານ ສະບັບເລກທີ 625/ນຍ, ລົງວັນທີ 22 ຕຸລາ 2021;
- ອີງຕາມ ໜັງສືລາຍງານ ຂອງກົມໄປສະນີ ສະບັບເລກທີ 572/ກປນ.4, ລົງວັນທີ 21 ພະຈິກ 2022.

**ລັດຖະມົນຕີ ກະຊວງເຕັກໂນໂລຊີ ແລະ ການສື່ສານ ອອກຂໍ້ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບມາດຕະຖານສະຖານທີ່ໃຫ້ບໍລິການໄປສະນີ ເພື່ອເຮັດໃຫ້ການຄຸ້ມຄອງ ແລະ ການນຳໃຊ້ສະຖານທີ່ດັ່ງກ່າວ ມີຄຸນະພາບ, ມີຄວາມສະດວກ ແລະ ປອດໄພ ແນໃສ່ຮັບປະກັນການບໍລິການດ້ານໄປສະນີໃຫ້ມີປະສິດທິພາບສູງ, ປົກປ້ອງສິດ ແລະ ຜົນປະໂຫຍດ ຂອງຜູ້ໃຊ້ບໍລິການ.

**ມາດຕາ 2 ມາດຕະຖານສະຖານທີ່ໃຫ້ບໍລິການໄປສະນີ**

ມາດຕະຖານສະຖານທີ່ໃຫ້ບໍລິການໄປສະນີ ແມ່ນ ການກຳນົດຄຸນລັກສະນະທາງດ້ານເຕັກນິກ ແລະ ອົງປະກອບຂອງສິ່ງອຳນວຍຄວາມສະດວກ ແລະ ການຮັກສາຄວາມປອດໄພ ທີ່ຮັບໃຊ້ໃຫ້ແກ່ການບໍລິການ ເພື່ອໃຊ້ເປັນຕົວຊີ້ວັດໃນການກວດກາ, ວັດແທກ, ຕີລາຄາ ແລະ ຈັດແບ່ງລະດັບຄຸນະພາບ ຂອງສະຖານທີ່ໃຫ້ບໍລິການດ້ານໄປສະນີ.

**ມາດຕາ 3 ອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

**1. ມາດຕະຖານ** ໝາຍເຖິງ ການກຳນົດຄຸນລັກສະນະສະເພາະຂອງຜະລິດຕະພັນ, ສິນຄ້າ, ການບໍລິການ, ຂະບວນການ, ສິ່ງແວດລ້ອມ ແລະ ບັນຫາອື່ນທີ່ກ່ຽວຂ້ອງກັບມາດຕະຖານ ເພື່ອຕີລາຄາ, ຈັດແບ່ງປະເພດ ແລະ ຈັດລະດັບຄຸນະພາບ ຂອງສິ່ງທີ່ກ່າວມານັ້ນ ຕາມກົດໝາຍວ່າດ້ວຍ ມາດຕະຖານ;

**2. ປ້ອງບໍລິການໄປສະນີ** ໝາຍເຖິງ ຈຸດໃຫ້ບໍລິການ ຮັບຝາກ ແລະ ແຈກຢາຍ ເຄື່ອງຝາກທາງໄປສະນີ ຊຶ່ງປະກອບດ້ວຍສິ່ງອຳນວຍຄວາມສະດວກທີ່ໃຊ້ເຂົ້າໃນການເຄື່ອນໄຫວ ຮັບຝາກ ແລະ ແຈກຢາຍ ທີ່ຕັ້ງຢູ່ພາຍໃນສູນການຄ້າ, ຕະຫຼາດ, ຮ້ານຄ້າ, ສະຖານີລົດໄຟ, ສະຖານີລົດຂົນສົ່ງໂດຍສານ, ສະໜາມບິນ ທ່າເຮືອ ແລະ ຕັ້ງຢູ່ຕາມເສັ້ນທາງຕ່າງໆ;

**3. ສູນແລກປ່ຽນເມໄປສະນີ** ໝາຍເຖິງ ຈຸດໃຫ້ບໍລິການ ແລກປ່ຽນເມທາງໄປສະນີ ພາຍໃນເຄືອຂ່າຍ ແລະ ຂ້າມເຄືອຂ່າຍ ຊຶ່ງມີເຄື່ອງມື ແລະ ສິ່ງອຳນວຍຄວາມສະດວກ ທີ່ໃຊ້ເຂົ້າໃນການເຄື່ອນໄຫວແລກປ່ຽນຖົງເມ ທີ່ຢູ່ຕາມແຂວງ ແລະ ເມືອງຕ່າງໆ;

**4. ຜູ້ປະກອບການດ້ານໄປສະນີ** ໝາຍເຖິງ ຜູ້ທີ່ດຳເນີນທຸລະກິດໃຫ້ບໍລິການ ຮັບຝາກ, ຈັດສົ່ງ ແລະ ແຈກຢາຍເຄື່ອງຝາກ ປະກອບດ້ວຍຜູ້ປະກອບການໄປສະນີ (Post), ຄູເລຍ (Courier), ໂລຈິດສະຕິກ (Logistics), ຈັດສົ່ງດ່ວນ (Express) ແລະ ແຈກຢາຍ (Delivery).

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບບຸກຄົນ ແລະ ນິຕິບຸກຄົນ ຊຶ່ງເປັນຜູ້ປະກອບການ ທີ່ໃຫ້ບໍລິການໄປສະນີ ຢູ່ພາຍໃນ ສປປ ລາວ.

## ໝວດທີ 2
## ມາດຕະຖານປ້ອງບໍລິການໄປສະນີ

**ມາດຕາ 5 ມາດຕະຖານປ້ອງບໍລິການໄປສະນີ**

ມາດຕະຖານປ້ອງບໍລິການໄປສະນີ ປະກອບດ້ວຍຕົວຊີ້ວັດ ໃນການປະເມີນລະດັບຄຸນະພາບ ດັ່ງນີ້:

1. ສະຖານທີ່ ແລະ ຂະໜາດຂອງປ້ອງບໍລິການ;
2. ລັກສະນະຂອງປ້ອງບໍລິການ;
3. ອົງປະກອບພາຍໃນຂອງປ້ອງບໍລິການ;
4. ປ້າຍຂອງປ້ອງບໍລິການ;
5. ລະບົບປ້ອງກັນອັກຄີໄພຂອງປ້ອງບໍລິການ;
6. ລະບົບກ້ອງວົງຈອນປິດຂອງປ້ອງບໍລິການ.

**ມາດຕາ 6 ຕົວຊີ້ວັດສະຖານທີ່ ແລະ ຂະໜາດຂອງປ້ອງບໍລິການ**

ທີ່ຕັ້ງ ແລະ ຂະໜາດຂອງປ້ອງບໍລິການ ຕ້ອງໃຫ້ຖືກຕາມຕົວຊີ້ວັດ ດັ່ງນີ້:

**ກ. ສຳລັບປ້ອງບໍລິການໄປສະນີ ທີ່ຕັ້ງຢູ່ຕາມເສັ້ນທາງ**

1. ຕັ້ງຫ່າງຈາກຂອບທາງ ໃຫ້ສອດຄ່ອງຕາມລະບຽບຂອງຂະແໜງການທີ່ກ່ຽວຂ້ອງ ໂດຍບໍ່ໃຫ້ກວມເອົາທາງຍ່າງ ແລະ ບໍ່ໃຫ້ຕັ້ງຢູ່ມູມໂຄ້ງຂອງທາງ ແລະ ຕ້ອງຫ່າງຈາກເຂດໄຟອຳນາດ ບໍ່ໃຫ້ຫຼຸດ 30 ແມັດ;

2. ເປັນພື້ນທີ່ຮາບພຽງດີ, ບໍ່ກວມເອົາເຂດສະຫງວນຂອງທາງ, ບໍ່ມີຕາຂ່າຍໄຟຟ້າແຮງກາງ ແລະ ແຮງສູງຜ່ານກາງສະຖານທີ່ໃຫ້ບໍລິການ ແລະ ມີຂະໜາດທີ່ພຽງພໍ ໂດຍໃຫ້ມີຄວາມກວ້າງຕິດກັບໜ້າທາງ ແລະ ຄວາມຍາວ ຊຶ່ງຫ່າງຈາກເຂດສະຫງວນຂອງທາງ ຕາມເງື່ອນໄຂ ດັ່ງນີ້:

- ເຂດພູດອຍ ແລະ ເຂດຫ່າງໄກສອກຫຼີກມີຄວາມກວ້າງຕິດໜ້າທາງບໍ່ໃຫ້ຫຼຸດ 3 ແມັດ ແລະ ຄວາມຍາວບໍ່ໃຫ້ຫຼຸດ 3 ແມັດ;

- ເຂດພູພຽງ, ເຂດທົ່ງພຽງ ແລະ ນອກເຂດຕົວເມືອງມີຄວາມກວ້າງຕິດໜ້າທາງບໍ່ໃຫ້ຫຼຸດ 3 ແມັດ ແລະ ຄວາມຍາວບໍ່ໃຫ້ຫຼຸດ 4 ແມັດ;

- ເຂດຕົວເມືອງ ມີຄວາມກວ້າງຕິດໜ້າທາງບໍ່ໃຫ້ຫຼຸດ 3 ແມັດ ແລະ ຄວາມຍາວບໍ່ໃຫ້ຫຼຸດ 5 ແມັດ.

**ຂ. ສໍາລັບປ້ອງບໍລິການໄປສະນີທີ່ຕັ້ງຢູ່ພາຍໃນສູນການຄ້າ, ຕະຫຼາດ, ສະຖານີລົດໄຟ, ສະຖານີລົດຂົນສົ່ງໂດຍສານ, ສະໜາມບິນ, ທ່າເຮືອ ແລະ ອາຄານຕ່າງໆ**

1. ສະຖານທີ່ໃຫ້ບໍລິການ ຕ້ອງສະອາດຈົບງາມ, ມີເນື້ອທີ່ພຽງພໍ ແລະ ແຍກໄວ້ສະເພາະ;

2. ຄວາມກວ້າງຂອງປ້ອງບໍລິການ ບໍ່ໃຫ້ຫຼຸດ 2 ແມັດ ແລະ ຄວາມຍາວ ບໍ່ໃຫ້ຫຼຸດ 3 ແມັດ.

## ມາດຕາ 7 ຕົວຊີ້ວັດລັກສະນະຂອງປ້ອງບໍລິການ

ລັກສະນະຂອງປ້ອງບໍລິການ ຕ້ອງໃຫ້ຖືກຕາມຕົວຊີ້ວັດ ດັ່ງນີ້:

1. ອາຄານ ຕ້ອງມີຄວາມແໜ້ນໜາ, ມີຄວາມປອດໄພຈາກສະພາບອາກາດ, ສາມາດປ້ອງກັນການຖືກລັກ, ງັດແງະ ແລະ ໄດ້ຮັບການອະນຸຍາດຈາກຂະແໜງການທີ່ກ່ຽວຂ້ອງ;

2. ມີເອກະລັກ ແລະ ບົ່ງບອກເຖິງການບໍລິການດ້ານໄປສະນີຢ່າງຊັດເຈນ;

3. ມີທາງເຂົ້າ-ອອກ ທີ່ສະດວກ;

4. ມີບ່ອນເກັບມ້ຽນເຄື່ອງຝາກ ຊຶ່ງຈັດເປັນບໍລິເວນສະເພາະບໍ່ໃຫ້ກີດຂວາງຜູ້ໃຊ້ບໍລິການ ແລະ ພະນັກງານໃຫ້ບໍລິການ ແລະ ຕ້ອງຮັບປະກັນບໍ່ໃຫ້ເກີດຄວາມເສຍຫາຍຕໍ່ເຄື່ອງຝາກ.

## ມາດຕາ 8 ຕົວຊີ້ວັດອຸປະກອນພາຍໃນຂອງປ້ອງບໍລິການ

ອຸປະກອນພາຍໃນຂອງປ້ອງບໍລິການ ຕ້ອງປະກອບມີຕົວຊີ້ວັດ ດັ່ງນີ້:

1. ໃບອະນຸຍາດດໍາເນີນທຸລະກິດ;

2. ປ້າຍສະແດງຄໍາແນະນໍາ ກ່ຽວກັບລະບຽບບໍລິການ ແລະ ວິທີການຮັບຝາກ;

3. ປ້າຍສະແດງລາຄາບໍລິການ;

4. ປ້າຍສະແດງສິ່ງຂອງເກືອດຫ້າມທາງໄປສະນີ;

5. ແບບຟອມ ແລະ ອຸປະກອນຮັບໃຊ້ສໍາລັບປະກອບຂໍ້ມູນຮັບຝາກ.

## ມາດຕາ 9 ຕົວຊີ້ວັດປ້າຍຂອງປ້ອງບໍລິການ

ປ້າຍຂອງປ້ອງບໍລິການ ຕ້ອງໃຫ້ຖືກຕາມຕົວຊີ້ວັດ ດັ່ງນີ້:

1. ເນື້ອໃນ, ຂະໜາດ ແລະ ຮູບຮ່າງ ໃຫ້ຖືກຕ້ອງຕາມລະບຽບຂອງຂະແໜງການທີ່ກ່ຽວຂ້ອງ;

2. ຕ້ອງບົ່ງບອກເຖິງປະເພດຜູ້ປະກອບການ ຕາມມາດຕາ 3 ຂໍ້ 4 ຂອງຂໍ້ຕົກລົງສະບັບນີ້ ແລະ ປະເພດການບໍລິການ ຕາມການອະນຸຍາດຂອງກົມໄປສະນີ ຢ່າງຊັດເຈນ ແລະ ສອດຄ່ອງຕາມລະບຽບການຂອງຂະແໜງການທີ່ກ່ຽວຂ້ອງ;

3. ປ້າຍຕ້ອງຕິດຕັ້ງໄວ້ດ້ານໜ້າເບື້ອງເທິງຂອງປ້ອງບໍລິການ, ມີຄວາມຊັດເຈນ ແລະ ແນມເຫັນໄດ້ງ່າຍ.

**ມາດຕາ 10 ຕົວຊີ້ວັດລະບົບປ້ອງກັນອັກຄີໄພຂອງປ້ອງບໍລິການ**

ລະບົບປ້ອງກັນອັກຄີໄພຂອງປ້ອງບໍລິການ ຕ້ອງຖືກຕາມຕົວຊີ້ວັດ ດັ່ງນີ້:

1. ມີອຸປະກອນຮັບໃຊ້ໃນການດັບເພີງ ແລະ ຄູ່ມືນຳໃຊ້ອຸປະກອນດັ່ງກ່າວ ຈັດວາງໄວ້ໃນບ່ອນທີ່ສະດວກຕໍ່ການນຳໃຊ້;

2. ມີໝາຍເລກໂທລະສັບຂອງໜ່ວຍດັບເພີງ ຕິດໄວ້ໃນບ່ອນທີ່ແນມເຫັນໄດ້ງ່າຍ ແລະ ຊັດເຈນດີ.

**ມາດຕາ 11 ຕົວຊີ້ວັດລະບົບກ້ອງວົງຈອນປິດຂອງປ້ອງບໍລິການ**

ລະບົບກ້ອງວົງຈອນປິດຂອງປ້ອງບໍລິການ ຕ້ອງໃຫ້ຖືກຕາມຕົວຊີ້ວັດ ດັ່ງນີ້:

1. ມີກ້ອງວົງຈອນປິດຕິດຕັ້ງຢູ່ພາຍໃນ ແລະ ພາຍນອກ ປ້ອງບໍລິການ ທີ່ສາມາດບັນທຶກຂໍ້ມູນການເຄື່ອນໄຫວໄດ້ຕະຫຼອດ 24 ຊົ່ວໂມງ;

2. ລະບົບໄຟຂອງກ້ອງວົງຈອນປິດ ຕ້ອງຮັບປະກັນການເຮັດວຽກຕະຫຼອດເວລາ;

3. ມີການສຳຮອງ ແລະ ເກັບຮັກສາຂໍ້ມູນໄວ້ຢ່າງໜ້ອຍ ສາມສິບ ວັນ.

## ໝວດທີ 3
## ມາດຕະຖານສູນແລກປ່ຽນເງິນໄປສະນີ

**ມາດຕາ 12 ມາດຕະຖານສູນແລກປ່ຽນເງິນໄປສະນີ**

ມາດຕະຖານສູນແລກປ່ຽນເງິນໄປສະນີ ປະກອບດ້ວຍຕົວຊີ້ວັດ ໃນການປະເມີນຄຸນະພາບຂອງສູນແລກປ່ຽນເງິນໄປສະນີ ດັ່ງນີ້:

1. ສະຖານທີ່ ແລະ ຂະໜາດ ຂອງສູນແລກປ່ຽນເງິນໄປສະນີ;
2. ສິ່ງອຳນວຍຄວາມສະດວກ ແລະ ສະພາບແວດລ້ອມ ຂອງສູນແລກປ່ຽນເງິນໄປສະນີ;
3. ລະບົບການຕ້ານ ແລະ ປ້ອງກັນອັກຄີໄພ ຂອງສູນແລກປ່ຽນເງິນໄປສະນີ;
4. ລະບົບກ້ອງວົງຈອນປິດ ຂອງສູນແລກປ່ຽນເງິນໄປສະນີ.

**ມາດຕາ 13 ຕົວຊີ້ວັດສະຖານທີ່ ແລະ ຂະໜາດ ຂອງສູນແລກປ່ຽນເງິນໄປສະນີ**

ທີ່ຕັ້ງ ແລະ ຂະໜາດ ຂອງສູນແລກປ່ຽນເງິນໄປສະນີ ຕ້ອງໃຫ້ຖືກຕາມຕົວຊີ້ວັດ ດັ່ງນີ້:

1. ຕັ້ງຫ່າງຈາກຂອບທາງ ໃຫ້ສອດຄ່ອງຕາມລະບຽບຂອງຂະແໜງການທີ່ກ່ຽວຂ້ອງ ໂດຍບໍ່ໃຫ້ກວມເອົາທາງຍ່າງ ແລະ ບໍ່ໃຫ້ຕັ້ງຢູ່ມຸມໂຄ້ງຂອງທາງ ແລະ ຕ້ອງຫ່າງຈາກເຂດໄຟອຳນາດ ບໍ່ໃຫ້ຫຼຸດ 50 ແມັດ;

2. ເປັນພື້ນທີ່ຮາບພຽງດີ, ບໍ່ກວມເອົາເຂດສະຫງວນຂອງທາງ, ບໍ່ມີຕາຂ່າຍໄຟຟ້າແຮງກາງ ແລະ ແຮງສູງ ຜ່ານກາງສະຖານທີ່ສູນແລກປ່ຽນເງິນໄປສະນີ ແລະ ມີຂະໜາດພຽງພໍ ໂດຍໃຫ້ມີຄວາມກວ້າງບໍ່ໃຫ້ຫຼຸດ 10 ແມັດ ແລະ ຄວາມຍາວ ບໍ່ໃຫ້ຫຼຸດ 20 ແມັດ.

**ມາດຕາ 14 ຕົວຊີ້ວັດສິ່ງອຳນວຍຄວາມສະດວກ ແລະ ສະພາບແວດລ້ອມ ຂອງສູນແລກປ່ຽນເງິນໄປສະນີ**

ສິ່ງອຳນວຍຄວາມສະດວກ ແລະ ສະພາບແວດລ້ອມຂອງສູນແລກປ່ຽນເງິນໄປສະນີ ຕ້ອງໃຫ້ຖືກຕາມຕົວຊີ້ວັດ ດັ່ງນີ້:

1. ມີອຸປະກອນຍົກຍໍ, ເຄື່ອນຍ້າຍ ແລະ ສິ່ງອຳນວຍຄວາມສະດວກອື່ນ ໃຫ້ແກ່ການປະຕິບັດວຽກງານທີ່ຮັບປະກັນຄວາມປອດໄພ;

2. ມີຫ້ອງປະຕິບັດການແລກປ່ຽນເມໄປສະນີ ຈັດໄວ້ເປັນເຂດສະເພາະທີ່ມີຄວາມສະອາດ, ສະດວກ ແລະ ປອດໄພ;

3. ມີສະຖານທີ່ຈອດລົດ ແຍກເປັນພື້ນທີ່ສະເພາະທີ່ມີຄວາມສະອາດ, ສະດວກ, ປອດໄພ ແລະ ເຂົ້າ-ອອກໄດ້ງ່າຍ;

4. ມີຈຸດບໍລິການໃຫ້ຄຳປຶກສາ ແລະ ໃຫ້ຂໍ້ມູນແກ່ຜູ້ໃຊ້ບໍລິການ;

5. ມີລະບົບການຕ້ານ ແລະ ປ້ອງກັນອັກຄີໄພ ຖືກຕ້ອງຕາມລະບຽບການຂອງຂະແໜງການທີ່ກ່ຽວຂ້ອງ;

6. ມີລະບົບໄຟແສງສະຫວ່າງທີ່ໄດ້ຮັບການຕິດຕັ້ງ ແລະ ຖືກຕ້ອງຕາມລະບຽບການຂອງຂະແໜງການທີ່ກ່ຽວຂ້ອງ;

7. ມີສາງເກັບມ້ຽນຖົງເມ ແລະ ເຄື່ອງຝາກທີ່ຮັບປະກັນຄວາມປອດໄພ ແຍກເປັນພື້ນທີ່ສະເພາະສະອາດ, ສະດວກ, ເປັນສັດສ່ວນ ລະຫວ່າງເຄື່ອງເຂົ້າ ແລະ ເຄື່ອງອອກ ແລະ ມີທາງເຂົ້າ-ອອກ ສະດວກ;

8. ການຕົບແຕ່ງສະຖານທີ່ ຕ້ອງມີເອກະລັກທີ່ສະແດງເຖິງຄວາມເປັນຕົວຕົນຂອງຜູ້ປະກອບການ;

9. ມີປ້າຍໃຫ້ຄຳແນະນຳ, ມີເຄື່ອງໝາຍບອກທາງໜີໄຟ, ທິດທາງການສັນຈອນ, ແຜນຜັງລວມຂອງສະຖານທີ່, ປ້າຍເຕືອນ ແລະ ເຂດຫວງຫ້າມທີ່ມີຂະໜາດ ແລະ ຕົວອັກສອນ ທີ່ສາມາດແນມເຫັນໄດ້ຢ່າງຊັດເຈນ ແລະ ຢູ່ໃນສະພາບດີ.

**ມາດຕາ 15 ຕົວຊີ້ວັດລະບົບການຕ້ານ ແລະ ປ້ອງກັນອັກຄີໄພ ຂອງສູນແລກປ່ຽນເມໄປສະນີ**

ລະບົບການຕ້ານ ແລະ ປ້ອງກັນອັກຄີໄພ ຂອງສູນແລກປ່ຽນເມໄປສະນີ ຕ້ອງຖືກຕາມຕົວຊີ້ວັດ ດັ່ງນີ້:

1. ມີອຸປະກອນຮັບໃຊ້ໃນການດັບເພີງ, ລະບົບເຕືອນໄພສຸກເສີນ ແລະ ຄູ່ມືນຳໃຊ້ອຸປະກອນດັ່ງກ່າວ ທີ່ຈັດວາງໄວ້ໃນບ່ອນທີ່ສະດວກຕໍ່ການນຳໃຊ້ ຊຶ່ງໄດ້ຮັບການກວດກາຈາກຂະແໜງການທີ່ກ່ຽວຂ້ອງຢ່າງຖືກຕ້ອງ;

2. ມີໝາຍເລກໂທລະສັບຂອງໜ່ວຍດັບເພີງ ຕິດໄວ້ບ່ອນທີ່ແນມເຫັນໄດ້ຢ່າງສະດວກ ແລະ ຊັດເຈນ;

3. ມີເຄື່ອງມືຕິດຕໍ່ສື່ສານ ທີ່ສາມາດນຳໃຊ້ໄດ້ທຸກເວລາ ແລະ ເປັນປົກກະຕິ;

4. ໄດ້ຮັບການຕິດຕັ້ງລະບົບໄຟຟ້າ ໂດຍໄດ້ຮັບການອອກແບບ, ຕິດຕັ້ງ ແລະ ກວດກາຈາກບໍລິສັດໄຟຟ້າ ທີ່ໄດ້ຮັບອະນຸຍາດຖືກຕ້ອງຕາມລະບຽບການຈາກຂະແໜງການທີ່ກ່ຽວຂ້ອງ;

5. ເຈົ້າຂອງສູນແລກປ່ຽນເມດ້ານໄປສະນີ ຕ້ອງມີຄວາມຮັບຜິດຊອບ ແລະ ມີມາດຕະການ ກ່ຽວກັບການຕ້ານ ແລະ ປ້ອງກັນໄພພາຍໃນສູນຂອງຕົນ ເປັນຕົ້ນ ການເກັບສິ່ງເສດເຫຼືອຕ່າງໆ, ວັດຖຸ, ສານເຄມີ ແລະ ສິ່ງໄວໄຟໃຫ້ໄກຈາກບໍລິເວນສາງເກັບມ້ຽນເຄື່ອງ ເພື່ອປ້ອງກັນການສ້າງຄວາມເສຍຫາຍຕໍ່ຖົງເມ ແລະ ເຄື່ອງຝາກໄດ້ງ່າຍ.

**ມາດຕາ 16 ຕົວຊີ້ວັດລະບົບກ້ອງວົງຈອນປິດ ຂອງສູນແລກປ່ຽນເມໄປສະນີ**

ລະບົບກ້ອງວົງຈອນປິດ ຂອງສູນແລກປ່ຽນເມໄປສະນີ ຕ້ອງໃຫ້ຖືກຕາມຕົວຊີ້ວັດ ດັ່ງນີ້:

1. ມີກ້ອງວົງຈອນປິດຕິດຕັ້ງຢູ່ທາງເຂົ້າ-ອອກ, ຈຸດໃຫ້ບໍລິການ ແລະ ເຂດຫວງຫ້າມທຸກບ່ອນທີ່ສາມາດບັນທຶກຂໍ້ມູນການເຄື່ອນໄຫວ ໄດ້ຕະຫຼອດເວລາ;

2. ລະບົບໄຟຂອງກ້ອງວົງຈອນປິດ ຕ້ອງຮັບປະກັນການເຮັດວຽກ ແລະ ບັນທຶກຂໍ້ມູນ ໄດ້ຕະຫຼອດ 24 ຊົ່ວໂມງ;

3. ມີການສຳຮອງ ແລະ ເກັບຮັກສາຂໍ້ມູນໄວ້ຢ່າງໜ້ອຍ ສາມສິບ ວັນ.

## ໝວດທີ 4
## ການກວດກາ ແລະ ຢັ້ງຢືນມາດຕະຖານ

**ມາດຕາ 17 ການກວດກາມາດຕະຖານ**

ການກວດກາມາດຕະຖານສະຖານທີ່ໃຫ້ບໍລິການໄປສະນີ ຕ້ອງປະຕິບັດ ດັ່ງນີ້:

1. ການດຳເນີນການກວດກາຂອງກົມໄປສະນີ ຕ້ອງມີຂໍ້ຕົກລົງ ຂອງລັດຖະມົນຕີ ກະຊວງເຕັກໂນໂລຊີ ແລະ ການສື່ສານ;

2. ການດຳເນີນການກວດກາຂອງຂະແໜງການໄປສະນີ ຕ້ອງມີຂໍ້ຕົກລົງຂອງຫົວໜ້າພະແນກເຕັກໂນໂລຊີ ແລະ ການສື່ສານ ປະຈຳແຂວງ ຫຼື ນະຄອນຫຼວງ;

3. ການກວດກາ ຕ້ອງກະກຽມເຄື່ອງມືໃນການກວດກາວັດແທກ ແລະ ແບບຟອມເກັບກຳຂໍ້ມູນຜົນການກວດກາ ເພື່ອບັນທຶກການກວດກາ ໂດຍມີການເຊັນຮັບຮູ້ລະຫວ່າງຜູ້ກວດກາ ແລະ ຜູ້ຖືກກວດກາ;

4. ພາຍຫຼັງກວດກາແລ້ວ ຫາກຄຸນະພາບຫຼຸດ 80% ລົງມາ ຕ້ອງແຈ້ງການຄືນຫາຜູ້ປະກອບການ ເພື່ອປັບປຸງແກ້ໄຂ ໃຫ້ສຳເລັດພາຍໃນ ຫົກສິບ ວັນ;

5. ການກວດກາ ຕ້ອງດຳເນີນການຢ່າງເປັນປົກກະຕິ ໂດຍເລີ່ມກວດກາ ນັບແຕ່ເດືອນພະຈິກຈົນເຖິງເດືອນທັນວາ ຂອງທຸກປີ.

**ມາດຕາ 18 ການຢັ້ງຢືນມາດຕະຖານ**

ການຢັ້ງຢືນມາດຕະຖານສະຖານທີ່ໃຫ້ບໍລິການໄປສະນີ ຕ້ອງອີງໃສ່ຄຸນະພາບຂອງຜົນການກວດກາ ດັ່ງນີ້:

1. ຄຸນະພາບ 79% ລົງມາ ຈະບໍ່ໄດ້ຮັບການຢັ້ງຢືນມາດຕະຖານ;

2. ຄຸນະພາບ 80% ຂຶ້ນໄປ ຈະໄດ້ຮັບການຢັ້ງຢືນມາດຕະຖານ ຕາມລະດັບທີ່ກຳນົດໃນມາດຕາ 19 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 19 ການວັດແທກຄຸນະພາບມາດຕະຖານ**

ການວັດແທກຄຸນະພາບມາດຕະຖານ ແມ່ນ ການກຳນົດອັດຕາສ່ວນຜົນສຳເລັດໃນການກວດກາວັດແທກ ຊຶ່ງຄິດໄລ່ເປັນເປີເຊັນ (%) ຈາກຈຳນວນຕົວຊີ້ວັດທີ່ໄດ້ມາດຕະຖານຄູນດ້ວຍໜຶ່ງຮ້ອຍ ແລະ ຫານ ດ້ວຍຈຳນວນຕົວຊີ້ວັດທີ່ມີທັງໝົດ ໂດຍຈັດລະດັບຄຸນະພາບ ດັ່ງນີ້:

1. ລະດັບແຕ່ 80% ຫາ 85% ແມ່ນ ຄຸນະພາບຂັ້ນພື້ນຖານ;

2. ລະດັບແຕ່ 85,1% ຫາ 95% ແມ່ນ ຄຸນະພາບດີ;

3. ລະດັບແຕ່ 95,1% ຫາ 100% ແມ່ນ ຄຸນະພາບດີເລີດ.

## ໝວດທີ 5
## ການຄຸ້ມຄອງວຽກງານມາດຕະຖານສະຖານທີ່ໃຫ້ບໍລິການໄປສະນີ

**ມາດຕາ 20 ອົງການຄຸ້ມຄອງວຽກງານມາດຕະຖານສະຖານທີ່ໃຫ້ບໍລິການໄປສະນີ**

ກະຊວງເຕັກໂນໂລຊີ ແລະ ການສື່ສານ ເປັນຜູ້ຄຸ້ມຄອງ ແລະ ກວດກາ ມາດຕະຖານສະຖານທີ່ໃຫ້ບໍລິການໄປສະນີ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກົມໄປສະນີ ແລະ ພະແນກເຕັກໂນໂລຊີ ແລະ ການສື່ສານ ແຂວງ, ນະຄອນຫຼວງ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ.

**ມາດຕາ 21  ສິດ ແລະ ໜ້າທີ່ ຂອງກົມໄປສະນີ**

ກົມໄປສະນີ ມີ ສິດ ແລະ ໜ້າທີ່ ໃນການຄຸ້ມຄອງ ແລະ ກວດກາ ວຽກງານມາດຕະຖານສະຖານທີ່ໃຫ້ບໍລິການໄປສະນີ ດັ່ງນີ້:

1. ໂຄສະນາ-ເຜີຍແຜ່ ຂໍ້ຕົກລົງສະບັບນີ້ ໃຫ້ແກ່ ພະແນກເຕັກໂນໂລຊີ ແລະ ການສື່ສານ ແຂວງ ນະຄອນຫຼວງ, ຜູ້ໃຫ້ບໍລິການ ແລະ ສັງຄົມ ຢ່າງກວ້າງຂວາງ ແລະ ເປັນປົກກະຕິ;

2. ກວດກາ ແລະ ຢັ້ງຢືນມາດຕະຖານຂອງສູນແລກປ່ຽນເມດ້ານໄປສະນີ ໂດຍສົມທົບກັບ ພະແນກເຕັກໂນໂລຊີ ແລະ ການສື່ສານ ແຂວງ, ນະຄອນຫຼວງ ທີ່ກ່ຽວຂ້ອງ;

3. ຊີ້ນໍາ, ຊຸກຍູ້, ຕິດຕາມ ແລະ ກວດກາ ຜູ້ໃຫ້ບໍລິການ ແລະ ພະແນກເຕັກໂນໂລຊີ ແລະ ການສື່ສານ ແຂວງ, ນະຄອນຫຼວງ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເປັນປົກກະຕິ;

4. ສະຫຼຸບ, ລາຍງານຜົນການເຄື່ອນໄຫວວຽກງານໃຫ້ຄະນະນໍາກະຊວງ ຢ່າງເປັນປົກກະຕິ;

5. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 22  ສິດ ແລະ ໜ້າທີ່ ຂອງພະແນກເຕັກໂນໂລຊີ ແລະ ການສື່ສານ ແຂວງ, ນະຄອນຫຼວງ**

ພະແນກເຕັກໂນໂລຊີ ແລະ ການສື່ສານ ແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ໃນການຄຸ້ມຄອງ ແລະ ກວດກາ ວຽກງານມາດຕະຖານສະຖານທີ່ໃຫ້ບໍລິການໄປສະນີ ດັ່ງນີ້:

1. ໂຄສະນາ-ເຜີຍແຜ່ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຕາມພາລະບົດບາດຂອງຕົນ;

2. ກວດກາ ແລະ ຢັ້ງຢືນມາດຕະຖານປ່ອງບໍລິການດ້ານໄປສະນີ ທີ່ຢູ່ໃນຂອບເຂດ ແລະ ຄວາມຮັບຜິດຊອບຂອງຕົນ;

3. ສະຫຼຸບລາຍງານຜົນການເຄື່ອນໄຫວວຽກງານໃຫ້ກົມໄປສະນີ ຢ່າງເປັນປົກກະຕິ;

4. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 6
## ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 23  ມາດຕະການປັບໃໝ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ຊຶ່ງບໍ່ເປັນການກະທໍາຜິດທາງອາຍາ, ເຄີຍຖືກກ່າວເຕືອນ ແລະ ສຶກສາອົບຮົມ ແຕ່ຍັງສືບຕໍ່ລະເມີດ ຈະຖືກປັບໃໝ ແຕ່ ຫ້າລ້ານກີບ ຫາສິບລ້ານກີບ ຕາມກໍລະນີເບົາ ຫຼື ໜັກ.

**ມາດຕາ 24  ມາດຕະການສັ່ງໂຈະຊົ່ວຄາວ ແລະ ຢຸດເຊົາ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ໄດ້ຖືກກ່າວເຕືອນຄວາມຜິດ ແລະ ປັບໃໝແລ້ວ ແຕ່ຍັງສືບຕໍ່ລະເມີດ ຈະຖືກສັ່ງໂຈະການໃຫ້ບໍລິການໄວ້ຊົ່ວຄາວໃນໄລຍະ ສາມ ຫາ ຫົກເດືອນ ຕາມກໍລະນີເບົາ ຫຼື ໜັກ.

ເມື່ອຄົບກໍານົດ ຕ້ອງໄດ້ມີການກວດກາຄືນຫາກເຫັນວ່າມີການປັບປຸງແກ້ໄຂໄດ້ຖືກຕ້ອງຕາມມາດຕະຖານທີ່ກໍານົດແລ້ວ ຈຶ່ງອະນຸຍາດໃຫ້ສືບຕໍ່ໃຫ້ບໍລິການຕໍ່ໄປ, ແຕ່ຫາກບໍ່ມີການປັບປຸງແກ້ໄຂ ແມ່ນຈະຖືກຢຸດເຊົາການໃຫ້ບໍລິການ ແລະ ຢຸດກິດຈະການຖາວອນ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

**ມາດຕາ 25 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມໄປສະນີ ແລະ ພະແນກເຕັກໂນໂລຊີ ແລະ ການສື່ສານ ແຂວງ, ນະຄອນຫຼວງ ສົມທົບ ກັບພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 26 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດພາຍຫຼັງສິບຫ້າວັນ ນັບແຕ່ວັນໄດ້ລົງລາຍເຊັນ ແລະ ລົງໃນຈົດໝາຍເຫດທາງລັດຖະການ.

ລັດຖະມົນຕີ

ບໍ່ວຽງຄຳ ວົງດາລາ